ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 208/ລບ

ນະຄອນຫຼວງວຽງຈັນ, ວັນທີ 23.03.2020

# ດຳລັດ
# ວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 253/ສສກ,ລົງວັນທີ 18 ກຸມພາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ສົ່ງເສີມ ວຽກງານຮຽນຮູ້ຕະຫຼອດຊີວິດ ເພື່ອເຮັດໃຫ້ການຈັດຕັ້ງ ການຮຽນ-ການສອນ, ການປະເມີນ, ການຮັບຮູ້, ການຢັ້ງຢືນ, ການທຽບເທົ່າ ແລະ ທຽບໂອນ ຜົນການຮຽນ ທີ່ໄດ້ຈາກການຮຽນຢູ່ໃນໂຮງຮຽນ, ນອກໂຮງຮຽນ ລວມທັງການສຶກສາຕາມອັດທະຍາໄສ ໃຫ້ມີຄວາມເປັນເອກະພາບ ແລະ ຄຸນນະພາບ ແນໃສ່ໃຫ້ພົນລະເມືອງລາວທຸກຄົນ ໄດ້ຮັບໂອກາດຍົກລະດັບການສຶກສາ, ຄວາມຮູ້, ຄວາມສາມາດ ທາງດ້ານວິຊາຊີບ, ຄວາມຊຳນິຊຳນານງານ ແລະ ມີຄຸນສົມບັດສິນທຳປະຕິວັດ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຮຽນຮູ້ຕະຫຼອດຊີວິດ

ການຮຽນຮູ້ຕະຫຼອດຊີວິດ ແມ່ນ ການສຶກສາທີ່ປະສົມປະສານ ລະຫວ່າງ ການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນ ລວມທັງການຮຽນຮູ້ຕາມອັດທະຍາໄສ ເພື່ອສົ່ງເສີມໃຫ້ທຸກຄົນ ທັງຍິງ ແລະ ຊາຍ ໄດ້ຮັບການຮຽນຮູ້ຕະຫຼອດໄລຍະທີ່ຍັງມີຊີວິດຢູ່, ສ້າງສັງຄົມພູມປັນຍາ ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຮຽນຮູ້ທີ່ປັບປ່ຽນໄດ້** ໝາຍເຖິງ ຮູບແບບ ແລະ ວິທີຈັດການຮຽນ-ການສອນ ທີ່ສາມາດປັບປ່ຽນເວລາສຳລັບຈັດການຮຽນ-ການສອນ, ໄລຍະເວລາສຳເລັດການຮຽນ, ສະຖານທີ່ຮຽນ ແລະ ເງື່ອນໄຂອື່ນທີ່ອຳນວຍຄວາມສະດວກໃຫ້ຜູ້ຮຽນ;

2. **ການວັດຜົນ** ໝາຍເຖິງ ຂະບວນການຈັດຫາຂໍ້ມູນ ກ່ຽວກັບຜົນສຳເລັດການຮຽນ ຂອງຜູ້ຮຽນ ເພື່ອນຳໄປສູ່ການຕັດສິນຄຸນຄ່າ ດ້ວຍຫຼາຍວິທີການ ເຊັ່ນ: ການກວດກາ, ການທົດສອບ, ການສອບເສັງ ແລະ ອື່ນໆ;

3. **ຄູປະຈຳ** ໝາຍເຖິງ ບຸກຄົນທີ່ປະຕິບັດໜ້າທີ່ສິດສອນ ຖ່າຍທອດຄວາມຮູ້ໃຫ້ຜູ້ຮຽນ ຢູ່ສະຖານການຮຽນຮູ້ຕະຫຼອດຊີວິດ ທັງພາກລັດ ແລະ ເອກະຊົນ ໂດຍມີມາດຕະຖານ, ນາມມະຍົດ, ຕຳແໜ່ງວິຊາການຄູ, ສິດ, ໜ້າທີ່, ພັນທະ ແລະ ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ;

4. **ຄູຮັບເຊີນ** ໝາຍເຖິງ ບຸກຄົນທີ່ຖືກຮັບເຊີນຈາກພາຍນອກ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາສິດສອນຖ່າຍທອດຄວາມຮູ້ໃຫ້ຜູ້ຮຽນ ດ້ວຍວິທີການ ແລະ ຮູບແບບ ການສິດສອນ ທີ່ສະຖານການຮຽນຮູ້ຕະຫຼອດຊີວິດກຳນົດໄວ້ໃນຫຼັກສູດ ໂດຍມີມາດຕະຖານ, ນາມມະຍົດ, ຕຳແໜ່ງວິຊາການຄູ, ສິດ, ໜ້າທີ່, ພັນທະ ແລະ ໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. **ຜົນການຮຽນ** ໝາຍເຖິງ ຄວາມຮູ້, ຄວາມສາມາດ, ທັກສະ ຫຼື ວຸດທິການສຶກສາ ທີ່ໄດ້ຈາກການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ

ລັດ ກຳນົດເອົາວຽກງານຮຽນຮູ້ຕະຫຼອດຊີວິດ ເປັນວຽກງານທີ່ສຳຄັນໃນການພັດທະນາຊັບພະຍາກອນມະນຸດ ດ້ວຍການຊຸກຍູ້ ແລະ ສົ່ງເສີມ ໃຫ້ພົນລະເມືອງລາວທຸກຄົນ ລວມທັງຄົນທີ່ຖືສັນຊາດລາວ ທີ່ອາໄສຢູ່ຕ່າງປະເທດ ແລະ ຄົນທີ່ຖືກຕັດອິດສະຫຼະພາບ ໄດ້ຮັບການບຳລຸງຍົກລະດັບທາງດ້ານຄວາມຮູ້, ຄວາມສາມາດ ແລະທັກສະ ດ້ວຍຮູບແບບ ແລະ ວິທີການຮຽນຮູ້ທີ່ປັບປ່ຽນໄດ້ ຕາມສະພາບຄວາມເປັນຈິງ.

ລັດ ສົ່ງເສີມ ການຮຽນຮູ້ຕະຫຼອດຊີວິດ ດ້ວຍການປະກອບບຸກຄະລາກອນ, ສະໜອງງົບປະມານ, ກໍ່ສ້າງໂຄງລ່າງພື້ນຖານ ສະຖານການຮຽນຮູ້ຕະຫຼອດຊີວິດ, ມີນະໂຍບາຍຕໍ່ຄູສອນ ແລະ ບຸກຄະລາກອນ ທີ່ເຮັດວຽກງານຮຽນຮູ້ຕະຫຼອດຊີວິດ ຕາມກົດໝາຍ ແລະ ລະບຽບການ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງການນຳໃຊ້ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະກອບສ່ວນທາງດ້ານຄວາມຮູ້, ສະຕິປັນຍາ, ເຕັກນິກວິທະຍາສາດທີ່ທັນສະໄໝ ແລະ ທຶນຮອນ ເຂົ້າໃນວຽກງານຮຽນຮູ້ຕະຫຼອດຊີວິດ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ຫຼັກການກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ

ການດຳເນີນວຽກງານຮຽນຮູ້ຕະຫຼອດຊີວິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

2. ຮັບປະກັນໃຫ້ມີລະບົບການປະເມີນ, ຮັບຮູ້, ທຽບເທົ່າ, ທຽບໂອນ ແລະ ຢັ້ງຢືນ ຜົນການຮຽນ ລະຫວ່າງການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ;

3. ມີລັກສະນະປັບປ່ຽນໄດ້, ຕໍ່ເນື່ອງ, ນຳໃຊ້ຫຼາຍຮູບແບບ ແລະ ສອດຄ່ອງກັບຄວາມເປັນຈິງ;

4. ຮັບປະກັນ ການປະກັນຄຸນນະພາບຕາມຂອບວຸດທິການສຶກສາແຫ່ງຊາດ ແລະ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ;

5. ຮັບປະກັນ ການມີສ່ວນຮ່ວມ ຂອງກະຊວງ, ອົງການ, ອົງການການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບວຽກງານຮຽນຮູ້ຕະຫຼອດຊີວິດ;

6. ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານຮຽນຮູ້ຕະຫຼອດຊີວິດ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການພັດທະນາວຽກງານຮຽນຮູ້ຕະຫຼອດຊີວິດ ດ້ວຍການແລກປ່ຽນບົດຮຽນ ທາງດ້ານວິຊາການ, ຂໍ້ມູນຂ່າວສານ, ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ

**ມາດຕາ 8 ການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ**

ການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ແມ່ນ ການຈັດການຮຽນ-ການສອນຕາມລະບົບການສຶກສາແຫ່ງຊາດ ໂດຍມີການຮັບປະກັນທາງຄຸນນະພາບຂອງການສຶກສາ ຕາມເນື້ອໃນຫຼັກສູດ ແລະ ມາດຕະຖານການທຽບເທົ່າ, ທຽບໂອນ ຜົນການຮຽນ.

ການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ປະກອບດ້ວຍ ສາມ ຮູບແບບ ຄື: ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ.

**ມາດຕາ 9 ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ໃນໂຮງຮຽນ**

ຮູບແບບການຮຽນ-ການສອນ ໃນການຮຽນຮູ້ຕະຫຼອດຊີວິດ ໃນໂຮງຮຽນ ແມ່ນ ການຈັດຕັ້ງການຮຽນ-ການສອນ ຢູ່ໃນໂຮງຮຽນ ຢ່າງເປັນລະບົບປົກກະຕິ, ມີການກຳນົດເວລາຮຽນ ແລະ ມີເນື້ອໃນຫຼັກສູດທີ່ຖືກຕ້ອງຕາມມາດຕະຖານການສຶກສາແຫ່ງຊາດ.

### ມາດຕາ 10 ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ນອກໂຮງຮຽນ

ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ນອກໂຮງຮຽນ ແມ່ນ ການຮຽນຮູ້ ຕາມການຮຽນ-ການສອນ ທີ່ແຕກຕ່າງຈາກການຮຽນ-ການສອນ ໃນໂຮງຮຽນ ໂດຍມີວິທີການ, ຮູບແບບ, ເວລາ ການຮຽນ-ການສອນ ແລະ ສະຖານທີ່ ຕາມເງື່ອນໄຂຄວາມສາມາດ ແລະ ຄວາມພ້ອມຂອງຜູ້ຮຽນ.

ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດ ນອກໂຮງຮຽນ ມີແບບການຮຽນ-ການສອນ ດັ່ງນີ້:

1. ແບບປະຈຳທີ່ ຊຶ່ງແມ່ນການຮຽນ-ການສອນ ຢູ່ສະຖານການສຶກສານອກໂຮງຮຽນ ເປັນຕົ້ນ ສູນການສຶກສານອກໂຮງຮຽນ ປະຈຳພາກ, ຂັ້ນ ແຂວງ, ເມືອງ, ສູນການຮຽນຮູ້ຊຸມຊົນ ແລະ ສະຖານທີ່ອື່ນ ຕາມສະພາບ ແລະ ເງື່ອນໄຂຕົວຈິງ;

2. ແບບເຄື່ອນທີ່ ຊຶ່ງແມ່ນການຮຽນ-ການສອນ ທີ່ຜູ້ສອນໄປຈັດການຮຽນ-ການສອນ ໃຫ້ຜູ້ຮຽນຢູ່ສະຖານທີ່ທີ່ເໝາະສົມ;

3. ແບບທາງໄກ ຊຶ່ງແມ່ນການຮຽນ-ການສອນ ທີ່ຜູ້ຮຽນ ແລະ ຜູ້ສອນ ບໍ່ຢູ່ໃນສະຖານທີ່ດຽວກັນ ແຕ່ຈັດການຮຽນ-ການສອນ ຜ່ານທາງສື່ຕ່າງໆ ເປັນຕົ້ນ ສື່ສິ່ງພິມ, ສື່ເອເລັກໂຕຣນິກຕ່າງໆ.

### ມາດຕາ 11 ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດຕາມອັດທະຍາໄສ

ຮູບແບບການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດຕາມອັດທະຍາໄສ ແມ່ນ ຮູບແບບການຮຽນຕາມຄວາມສະໝັກໃຈຂອງຜູ້ຮຽນ ໂດຍຜ່ານ ຫຼື ບໍ່ຜ່ານການຈົດທະບຽນຮຽນ ນຳສະຖານການສຶກສາ ຊຶ່ງຜູ້ຮຽນ ເປັນຜູ້ສົນໃຈ ຮຽນຮູ້, ຄົ້ນຄວ້າ ດ້ວຍຕົນເອງ, ຮຽນຮູ້ຈາກສະຖານການສຶກສາ ຫຼື ບຸກຄົນທີ່ມີຄວາມຮູ້ສະເພາະດ້ານ ທີ່ບໍ່ເປັນລະບົບ ແລະ ບໍ່ຕໍ່ເນື່ອງ ຕາມຫົວຂໍ້, ບັນຫາທີ່ຕົນສົນໃຈ, ຕາມສະພາບ ແລະ ເງື່ອນໄຂຕົວຈິງ.

ການຮຽນ-ການສອນໃນການຮຽນຮູ້ຕະຫຼອດຊີວິດຕາມອັດທະຍາໄສ ມີ ດັ່ງນີ້:

1. ການຮຽນຮູ້ດ້ວຍຕົວເອງຕາມສາຍອາຊີບ ຊຶ່ງແມ່ນການຮຽນຮູ້ຕາມສາຍອາຊີບ ຂອງວຽກງານຕົນ ເປັນຕົ້ນ ການເຂົ້າຮ່ວມຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ;

2. ການຮຽນຕາມຄວາມສົນໃຈສ່ວນຕົວ ຊຶ່ງແມ່ນການຮຽນຮູ້ຕາມຄວາມມັກ, ການສະແຫວງຫາ, ຮຽນຮູ້, ສຶກສາ, ຄົ້ນຄວ້າ ສິ່ງທີ່ຕົນເອງສົນໃຈສະເພາະດ້ານໃດໜຶ່ງ;

3. ການຮຽນຮູ້ຈາກປະສົບການ ຊຶ່ງແມ່ນການຮຽນຮູ້ໂດຍຜ່ານສະພາບແວດລ້ອມ ເປັນຕົ້ນ ການຮຽນຮູ້ຈາກປະສົບການຕົວຈິງ, ເຫດການ ຫຼື ປະກົດການ ໃດໜຶ່ງ ທີ່ຕົນພົບພໍ້ ຫຼື ເກີດຂຶ້ນ ໃນຊີວິດປະຈຳວັນ.

### ມາດຕາ 12 ຫຼັກສູດ, ຕຳລາ ແລະ ເອກະສານ ການຮຽນຮູ້ຕະຫຼອດຊີວິດ

ການຮຽນຮູ້ຕະຫຼອດຊີວິດ ມີຫຼັກສູດ, ຕຳລາ ແລະ ເອກະສານ ນຳໃຊ້ເຂົ້າໃນການຮຽນ-ການສອນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການສຶກສາ.

ສຳລັບການສຶກສາຕາມອັດທະຍາໄສ ນັ້ນ ບໍ່ມີຫຼັກສູດ, ຕຳລາ ແລະ ເອກະສານ ຂອງການຮຽນ-ການສອນທີ່ແນ່ນອນ.

### ມາດຕາ 13 ສະຖານການຮຽນຮູ້ຕະຫຼອດຊີວິດ

ສະຖານການຮຽນຮູ້ຕະຫຼອດຊີວິດ ແມ່ນ ສະຖານການສຶກສາທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ.

ສຳລັບການສຶກສາຕາມອັດທະຍາໄສ ນັ້ນ ແມ່ນ ບໍ່ຈຳກັດສະຖານທີ່ ໃນການຮຽນຮູ້ ຊຶ່ງຜູ້ຮຽນ ສາມາດຮຽນຮູ້ຕາມຄວາມສາມາດ, ຄວາມຕ້ອງການ, ສະພາບ, ເງື່ອນໄຂ ແລະ ຄວາມສະດວກຂອງຕົນ.

### ມາດຕາ 14 ຄູການຮຽນຮູ້ຕະຫຼອດຊີວິດ

ຄູການຮຽນຮູ້ຕະຫຼອດຊີວິດ ແມ່ນ ບຸກຄົນທີ່ປະຕິບັດໜ້າທີ່ສິດສອນ ຖ່າຍທອດຄວາມຮູ້ ໃຫ້ຜູ້ຮຽນ ຢູ່ສະຖານການຮຽນຮູ້ຕະຫຼອດຊີວິດ ທັງພາກລັດ ແລະ ເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍວ່າດ້ວຍການສຶກສາ.

ຄູການຮຽນຮູ້ຕະຫຼອດຊີວິດ ປະກອບດ້ວຍ ຄູປະຈຳ ແລະ ຄູຮັບເຊີນ.

ສຳລັບການສຶກສາຕາມອັດທະຍາໄສ ແມ່ນບໍ່ມີຄູສອນທີ່ແນ່ນອນ ແຕ່ອາດມີ ຜູ້ແນະນຳ, ຜູ້ອຳນວຍຄວາມສະດວກໃນການຮຽນ.

### ມາດຕາ 15 ບຸກຄະລາກອນການຮຽນຮູ້ຕະຫຼອດຊີວິດ

ບຸກຄະລາກອນການຮຽນຮູ້ຕະຫຼອດຊີວິດ ແມ່ນ ບຸກຄົນທີ່ເຮັດໜ້າທີ່ ແລະ ຮັບຜິດຊອບ ກ່ຽວກັບ ການຄຸ້ມຄອງ-ບໍລິຫານ, ກວດກາ, ແນະນຳ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຮຽນ-ການສອນຢູ່ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ.

ມາດຕະຖານຂອງບຸກຄະລາກອນ ການຮຽນຮູ້ຕະຫຼອດຊີວິດ ທີ່ສັງກັດຢູ່ສະຖານການສຶກສາ ຂອງພາກລັດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ. ສຳລັບມາດຕະຖານຂອງບຸກຄະລາກອນ ທີ່ສັງກັດຢູ່ ສະຖານການສຶກສາ ຂອງພາກເອກະຊົນ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງ, ອົງການທີ່ກ່ຽວຂ້ອງ ວາງອອກ.

ບຸກຄະລາກອນການຮຽນຮູ້ຕະຫຼອດຊີວິດ ໄດ້ຮັບນະໂຍບາຍ ໃນການປະຕິບັດໜ້າທີ່, ຍົກລະດັບວິຊາສະເພາະ, ຊີວິດການເປັນຢູ່ ແລະ ສະຖານະທາງສັງຄົມ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການປະເມີນ, ການຮັບຮູ້, ການຢັ້ງຢືນ, ການທຽບເທົ່າ ແລະ ທຽບໂອນ ຜົນການຮຽນ

### ມາດຕາ 16 ການປະເມີນຜົນການຮຽນ

ການປະເມີນຜົນການຮຽນ ແມ່ນ ການວັດແທກລະດັບ ຄວາມຮູ້, ຄວາມສາມາດ, ທັກສະ ແລະ ວຸດທິການສຶກສາ ຂອງຜູ້ຮຽນ ແບບຕໍ່ເນື່ອງ ຕາມຊັ້ນຮຽນ ແລະ ຂັ້ນຮຽນ ຢູ່ສະຖານການຮຽນຮູ້ຕະຫຼອດຊີວິດ ຕາມລະບົບ ຂອງການສຶກສາແຫ່ງຊາດ.

ສຳລັບລາຍລະອຽດ ກ່ຽວກັບການປະເມີນຜົນການຮຽນ ຂອງຜູ້ຮຽນຮູ້ຕະຫຼອດຊີວິດ ໃຫ້ປະຕິບັດຕາມການກຳນົດຂອງກະຊວງສຶກສາທິການ ແລະ ກິລາ ໂດຍປະສານສົມທົບກັບບັນດາກະຊວງ, ອົງການ ທີ່ກ່ຽວຂ້ອງ.

ມາດຕາ 17 ການຮັບຮູ້ຜົນການຮຽນ

ການຮັບຮູ້ຜົນການຮຽນ ແມ່ນ ການຍອມຮັບຜົນການຮຽນ ທີ່ໄດ້ຈາກການຮຽນຕາມສະຖານການສຶກສາ ຫຼື ຈາກການສຶກສາຕາມອັດທະຍາໄສ ຊຶ່ງໄດ້ຜ່ານການປະເມີນຕາມລະບຽບການ ເພື່ອນຳໃຊ້ສຳລັບການທຽບເທົ່າ, ທຽບໂອນ, ສືບຕໍ່, ຕໍ່ເນື່ອງ, ເຊື່ອມຕໍ່ ຫຼື ຢັ້ງຢືນວຸດທິການສຶກສາ ຕາມຜົນການຮຽນ.

ສຳລັບລາຍລະອຽດກ່ຽວກັບການຮັບຮູ້ຜົນການຮຽນຂອງຜູ້ຮຽນຮູ້ຕະຫຼອດຊີວິດ ໃຫ້ປະຕິບັດ ຕາມການກຳນົດຂອງກະຊວງສຶກສາທິການ ແລະ ກິລາ ໂດຍປະສານສົມທົບກັບບັນດາກະຊວງ, ອົງການ ທີ່ກ່ຽວຂ້ອງ.

**ມາດຕາ 18 ການຢັ້ງຢືນຜົນການຮຽນ**

ການຢັ້ງຢືນຜົນການຮຽນ ແມ່ນ ການອອກ ປະກາສະນີຍະບັດ ຫຼື ໃບຢັ້ງຢືນ ວຸດທິການສຶກສາ ໃຫ້ແກ່ຜູ້ຮຽນ ໃນສະຖານການຮຽນຮູ້ຕະຫຼອດຊີວິດ ຊຶ່ງພາກສ່ວນທີ່ຈັດການຮຽນ-ການສອນ ເປັນຜູ້ອອກໃບປະກາສະນີຍະບັດ ວຸດທິການສຶກສາ ຫຼື ໃບຢັ້ງຢືນ ວຸດທິການສຶກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ.

ສຳລັບການສຶກສາຕາມອັດທະຍາໄສ ຂອງຜູ້ຮຽນທີ່ໄດ້ລົງທະບຽນ ໃຫ້ສະຖານການສຶກສາທີ່ກ່ຽວຂ້ອງ ເປັນຜູ້ອອກປະກາສະນີຍະບັດ ຫຼື ໃບຢັ້ງຢືນ ວຸດທິການສຶກສາ. ສຳລັບຜູ້ຮຽນທີ່ບໍ່ໄດ້ລົງທະບຽນ ໃຫ້ສະຖານການສຶກສານອກໂຮງຮຽນ ເປັນຜູ້ປະເມີນຜົນ ແລ້ວໃຫ້ສະຖານການສຶກສາທີ່ຜູ້ກ່ຽວໄດ້ເສັງທຽບນັ້ນ ເປັນຜູ້ອອກປະກາສະນີຍະບັດ ຫຼື ໃບຢັ້ງຢືນວຸດທິການສຶກສາ.

**ມາດຕາ 19 ການທຽບເທົ່າ ແລະ ການທຽບໂອນ ຜົນການຮຽນ**

ການທຽບເທົ່າຜົນການຮຽນ ແມ່ນ ການຈັດລະດັບຄວາມຮູ້, ຄວາມສາມາດ, ທັກສະ ຫຼື ວຸດທິການສຶກສາ ໃສ່ຊັ້ນ, ຂັ້ນຮຽນ ໃຫ້ມີຄຸນຄ່າທຽບເທົ່າກັນ ລະຫວ່າງ ສະຖານການຮຽນຮູ້ຕະຫຼອດຊີວິດ.

ການທຽບໂອນຜົນການຮຽນ ແມ່ນ ການສົມທຽບ ຄວາມຮູ້, ຄວາມສາມາດ, ທັກສະ ຫຼື ວຸດທິການສຶກສາ ເພື່ອຈັດລະດັບໃຫ້ຖືກຕາມ ຊັ້ນ, ຂັ້ນ ຂອງການສຶກສາ ໂດຍບໍ່ຈຳແນກແຫຼ່ງຂອງການຮຽນຮູ້ ຕາມກົດໝາຍວ່າດ້ວຍການສຶກສາ ແລະ ສາມາດໂອນ ລະຫວ່າງ ການສຶກສາໃນໂຮງຮຽນ, ນອກໂຮງຮຽນ, ການສຶກສາຕາມອັດທະຍາໄສ ແລະ ຈາກຮູບແບບການສຶກສາໜຶ່ງ ໄປຫາຮູບແບບການສຶກສາອື່ນ.

## ໝວດທີ 4
## ການປະກັນຄຸນນະພາບການຮຽນຮູ້ຕະຫຼອດຊີວິດ

**ມາດຕາ 20 ການປະກັນຄຸນນະພາບ**

ທຸກສະຖານການສຶກສາ ທີ່ດຳເນີນການຮຽນ-ການສອນ ຕ້ອງມີລະບົບປະກັນຄຸນນະພາບ ພາຍໃນ ເພື່ອຕິດຕາມ, ກວດກາ ການຮຽນ-ການສອນ ແນໃສ່ເຮັດໃຫ້ຜົນການຮຽນ-ການສອນ ສຳລັບການຮຽນຮູ້ຕະຫຼອດຊີວິດ ທຸກຮູບແບບ ໃຫ້ມີຄຸນນະພາບເທົ່າທຽບກັນ ແລະ ສອດຄ່ອງກັບມາດຕະຖານການປະກັນຄຸນນະພາບການສຶກສາແຫ່ງຊາດ.

ມາດຕາ 21 ການກວດກາຄຸນນະພາບ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ປະສານສົມທົບກັບ ກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງການກວດກາຄຸນນະພາບການຮຽນ-ການສອນ ຢູ່ສະຖານການຮຽນຮູ້ຕະຫຼອດຊີວິດ ທັງພາກລັດ ແລະ ເອກະຊົນ ແຕ່ລະໄລຍະ ຢ່າງເປັນປົກກະຕິ ເພື່ອໃຫ້ການດໍາເນີນການຮຽນ-ການສອນ ສໍາລັບການຮຽນຮູ້ຕະຫຼອດຊີວິດ ມີປະສິດທິພາບ ແລະ ປະສິດທິຜົນ.

## ໝວດທີ 5
## ຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ

### ມາດຕາ 22 ຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ

ຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ແມ່ນຄະນະກໍາມາທິການດຽວກັນກັບ ຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ຊຶ່ງມີພາລະບົດບາດ ໃນການຊີ້ນໍາ, ຊຸກຍູ້, ສົ່ງເສີມ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ.

ສໍາລັບຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ຂັ້ນແຂວງ ໃຫ້ຖືເອົາຄະນະກໍາມາການ ເພື່ອການພັດທະນາຊັບພະຍາກອນມະນຸດ ຂັ້ນແຂວງ; ສ່ວນຂັ້ນເມືອງ ແລະ ຂັ້ນບ້ານ ໃຫ້ຖືເອົາຄະນະພັດທະນາການສຶກສາຂັ້ນເມືອງ ແລະ ຂັ້ນບ້ານ.

### ມາດຕາ 23 ກອງເລຂາຂອງຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ

ກອງເລຂາຂອງຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແມ່ນກົງຈັກຊ່ວຍວຽກຂອງຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ແຕ່ລະຂັ້ນ ຊຶ່ງມີພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະກໍາມະການ ເພື່ອການຮຽນຮູ້ຕະຫຼອດຊີວິດ ໃນຂັ້ນຂອງຕົນ ຊຶ່ງປະກອບດ້ວຍ:

1. ກອງເລຂາຂອງຄະນະກໍາມາທິການແຫ່ງຊາດ ໂດຍແມ່ນກົມການສຶກສານອກໂຮງຮຽນ ແລະ ຜູ້ຕາງໜ້າຈາກກົມວິຊາການທີ່ກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ;

2. ກອງເລຂາຂອງຄະນະກໍາມະການຂັ້ນກະຊວງ, ອົງການ ໂດຍແມ່ນກົມວິຊາການທີ່ກ່ຽວຂ້ອງ ຂອງກະຊວງ, ອົງການ ດັ່ງກ່າວ;

3. ກອງເລຂາຂອງຄະນະກໍາມະການຂັ້ນແຂວງ ໂດຍແມ່ນພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ.

4. ກອງເລຂາຂອງຄະນະກໍາມະການຂັ້ນເມືອງ ໂດຍແມ່ນຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ.

# ໝວດທີ 6
# ການຄຸ້ມຄອງ ແລະ ການກວດກາ ວຽກງານຮຽນຮູ້ຕະຫຼອດຊີວິດ

**ມາດຕາ 24 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຮຽນຮູ້ຕະຫຼອດຊີວິດ**

ລັດຖະບານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານຮຽນຮູ້ຕະຫຼອດຊີວິດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການປະສານສົມທົບກັບ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຮຽນຮູ້ຕະຫຼອດຊີວິດ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານຮຽນຮູ້ຕະຫຼອດຊີວິດ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ຍຸດທະສາດ, ແຜນການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ ລະດັບຊາດ ບົນພື້ນຖານຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ;

2. ຄົ້ນຄວ້າສ້າງ ມາດຕະຖານ, ເງື່ອນໄຂ, ລະບຽບການ ແລະ ບົດແນະນຳ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ ເພື່ອເປັນບ່ອນອີງໃຫ້ອົງການຈັດຕັ້ງຂອງ ພັກ, ລັດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ;

4. ຄົ້ນຄວ້າ ສ້າງ ແລະ ປັບປຸງ ກົນໄກການຂະຫຍາຍໂອກາດການຮຽນຮູ້ຕະຫຼອດຊີວິດ ເພື່ອສົ່ງເສີມໃຫ້ພົນລະເມືອງລາວທຸກຄົນ ມີໂອກາດໄດ້ຮັບການຮຽນຮູ້ຕະຫຼອດຊີວິດ;

5. ຄົ້ນຄວ້າ ສ້າງ, ປັບປຸງ ແລະ ຮັບຮອງ ຫຼັກສູດການຮຽນ-ການສອນ ທີ່ຫຼາກຫຼາຍ ແລະ ສອດຄ່ອງ ກັບຮູບແບບການຈັດການຮຽນຮູ້ຕະຫຼອດຊີວິດ;

6. ປະສານສົມທົບກັບ ກະຊວງ, ອົງການທີ່ຮັບຜິດຊອບໃນການຮຽນຮູ້ຕະຫຼອດຊີວິດ ຄົ້ນຄວ້າສ້າງ ລະບຽບການ ກ່ຽວກັບ ການປະເມີນ, ການຮັບຮູ້, ການທຽບເທົ່າ, ການທຽບໂອນ ແລະ ການຢັ້ງຢືນ ຜົນການຮຽນຂອງຜູ້ຮຽນ ໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ ໃຫ້ສາມາດເຊື່ອມເຂົ້າກັບລະບົບການສຶກສາແຫ່ງຊາດ ເພື່ອຍົກລະດັບໃຫ້ສູງຂຶ້ນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

7. ສ້າງ ແລະ ປັບປຸງ ນະໂຍບາຍ ເພື່ອສົ່ງເສີມໃຫ້ສັງຄົມ ປະກອບສ່ວນເຂົ້າໃນວຽກງານຮຽນຮູ້ຕະຫຼອດຊີວິດ, ນະໂຍບາຍຕໍ່ຄູສອນ ແລະ ບຸກຄະລາກອນ ຕາມທີ່ໄດ້ກຳນົດໄວ້ກົດໝາຍ;

8. ຂຶ້ນແຜນງົບປະມານປະຈໍາປີ ເພື່ອສົ່ງເສີມ ແລະ ຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

9. ສ້າງຄວາມເຂັ້ມແຂງດ້ານວິຊາການ ໃຫ້ແກ່ບຸກຄະລາກອນ ແລະ ເຄືອຂ່າຍ ຄູ່ຮ່ວມພັດທະນາ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ສໍາລັບການເຄື່ອນໄຫວກິດຈະກໍາການຮຽນຮູ້ຕະຫຼອດຊີວິດ;

10. ສ້າງກົນໄກຈັດຕັ້ງປະຕິບັດ ການປະເມີນ, ການຮັບຮູ້, ການຢັ້ງຢືນ, ການທຽບເທົ່າ ແລະ ການທຽບໂອນ ຜົນການຮຽນຮູ້ຕະຫຼອດຊີວິດ;

11. ອະນຸມັດສ້າງຕັ້ງ, ສັ່ງໂຈະຊົ່ວຄາວ ແລະ ສັ່ງຍຸບ ສະຖານການສຶກສາ ທີ່ຈັດຕັ້ງດໍາເນີນວຽກງານການຮຽນຮູ້ຕະຫຼອດຊີວິດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

12. ຊຸກຍູ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງການສົ່ງເສີມການຮຽນຮູ້ດ້ວຍຕົນເອງ ດ້ວຍການ ສ້າງ ແລະ ປັບປຸງ ລະບຽບການຕ່າງໆ ເພື່ອເຮັດໃຫ້ປະຊາຊົນລາວ ໄດ້ສຶກສາຮໍ່າຮຽນ, ບໍາລຸງຍົກລະດັບດ້ານ ຄວາມຮູ້, ຄວາມສາມາດ ຢູ່ທຸກຂັ້ນ, ທຸກຊັ້ນ, ໄດ້ເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານ ແລະ ແຫຼ່ງຄວາມຮູ້ຕ່າງໆ ເປັນຕົ້ນ ສື່ເອເລັກໂຕຣນິກ, ສື່ອອນລາຍ ທາງອິນເຕີເນັດ, ຫໍສະໝຸດ;

13. ປະສານສົມທົບກັບ ກະຊວງ, ອົງການທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຊຸກຍູ້, ສົ່ງເສີມ, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງດໍາເນີນວຽກງານການຮຽນຮູ້ຕະຫຼອດຊີວິດ ເປັນແຕ່ລະໄລຍະ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການພັດທະນາ ແລະ ຄຸນນະພາບ;

14. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຮຽນຮູ້ຕະຫຼອດຊີວິດ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນການ ຮຽນຮູ້ຕະຫຼອດຊີວິດ ເປັນແຜນງານ, ໂຄງການ ແລະ ກິດຈະກໍາ ລະດັບ ແຂວງ, ນະຄອນຫຼວງ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ;

3. ຊີ້ນໍາສະຖານການສຶກສາທີ່ຂຶ້ນກັບພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ໃນການຈັດຕັ້ງດໍາເນີນການຮຽນ-ການສອນ ແລະ ການປະເມີນຜົນການຮຽນ ໃຫ້ຖືກຕ້ອງ ຕາມຫຼັກການຂອງການຮຽນຮູ້ຕະຫຼອດຊີວິດ ໃຫ້ມີຄຸນນະພາບ, ໂປ່ງໃສ ແລະ ຍຸຕິທໍາ;

4. ຊຸກຍູ້, ສົ່ງເສີມ ແລະ ອະນຸມັດສ້າງຕັ້ງ ສະຖານການສຶກສາການຮຽນຮູ້ຕະຫຼອດຊີວິດ;

5. ອະນຸມັດສ້າງຕັ້ງ, ສັ່ງໂຈະຊົ່ວຄາວ ແລະ ສັ່ງຍຸບ ສະຖານການສຶກສາ ທີ່ຈັດຕັ້ງດໍາເນີນວຽກງານຮຽນຮູ້ຕະຫຼອດຊີວິດ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

6. ຂຶ້ນແຜນງົບປະມານປະຈໍາປີ ເພື່ອສົ່ງເສີມ ແລະ ຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ;

7. ປະສານສົມທົບກັບ ພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພາຍໃນແຂວງ, ນະຄອນຫຼວງ ຊຸກຍູ້, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານການຮຽນຮູ້ຕະຫຼອດຊີວິດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີ ການພັດທະນາ ແລະ ຄຸນນະພາບ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ ໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 27 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ

ໃນການຄຸ້ມຄອງວຽກງານຮຽນຮູ້ຕະຫຼອດຊີວິດ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ແຜນການ ຮຽນຮູ້ຕະຫຼອດຊີວິດ ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳ ລະດັບເມືອງ, ເທດສະບານ, ນະຄອນ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ;

3. ຊີ້ນຳສະຖານການສຶກສາ ທີ່ຂຶ້ນກັບຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ ຈັດຕັ້ງປະຕິບັດການຮຽນ-ການສອນ, ການປະເມີນຜົນ ແລະ ການຢັ້ງຢືນຜົນການຮຽນ ໃຫ້ຖືກຕ້ອງ ຕາມຫຼັກການຂອງການຮຽນຮູ້ຕະຫຼອດຊີວິດ, ໃຫ້ມີຄຸນນະພາບ, ໂປ່ງໃສ ແລະ ຍຸຕິທຳ;

4. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ສະຖານການສຶກສາທີ່ຈັດຕັ້ງການຮຽນຮູ້ຕະຫຼອດຊີວິດ ໃຫ້ປະຕິບັດຕາມນິຕິກຳ ແລະ ລະບຽບການ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ;

5. ປຸກລະດົມ, ຊຸກຍູ້ ໃຫ້ສະຖານການສຶກສາທີ່ຂຶ້ນກັບ ເມືອງ, ເທດສະບານ, ນະຄອນ ຈັດຕັ້ງປະຕິບັດການຮຽນຮູ້ຕະຫຼອດຊີວິດ ໂດຍແນໃສ່ສ້າງໃຫ້ເປັນສະຖານການຮຽນຮູ້ຕະຫຼອດຊີວິດ;

6. ຂຶ້ນແຜນງົບປະມານປະຈຳປີ ເພື່ອສົ່ງເສີມ ແລະ ຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ;

7. ປະສານສົມທົບ ກັບຫ້ອງການ, ອົງການທຽບເທົ່າຫ້ອງການ ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງພາຍໃນ ເມືອງ, ເທດສະບານ, ນະຄອນ ຊຸກຍູ້, ຄຸ້ມຄອງ, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງດຳເນີນວຽກງານການຮຽນຮູ້ຕະຫຼອດຊີວິດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີ ການພັດທະນາ ແລະ ຄຸນນະພາບ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 28 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ, ກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ການສົ່ງເສີມ, ການເຂົ້າເຖິງ, ການເຜີຍແຜ່ ແລະ ການກວດກາ ຂໍ້ມູນ ຂ່າວສານ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ;

2. ປະສານສົມທົບກັບ ກະຊວງສຶກສາທິການ ແລະ ກິລາ, ອົງການລັດທຽບເທົ່າກະຊວງ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດລະບຽບການກ່ຽວກັບ ການປະເມີນ, ການຮັບຮູ້, ການທຽບເທົ່າ, ການທຽບໂອນ ແລະ ການຢັ້ງຢືນ ຜົນການຮຽນຂອງຜູ້ຮຽນ ໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ລວມທັງການປຸກຈິດສຳນຶກ ແລະ ສົ່ງເສີມການຮຽນຮູ້ດັ່ງກ່າວ;

4. ຈັດຕັ້ງຜັນຂະຫຍາຍວຽກງານການຮຽນຮູ້ຕະຫຼອດຊີວິດ ຢູ່ຂັ້ນທ້ອງຖິ່ນ ໂດຍການປຸກລະດົມປະຊາຊົນໃຫ້ເຂົ້າໃຈ ຕໍ່ກັບວຽກງານສຶກສາ ແລະ ເປັນເຈົ້າການ ໃນວຽກງານຮຽນຮູ້ຕະຫຼອດຊີວິດ;

5. ສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ສະຖານການສຶກສາທີ່ຈັດຕັ້ງດຳເນີນການຮຽນ-ການສອນ, ການປະເມີນຜົນ ແລະ ຢັ້ງຢືນ ຜົນການຮຽນ ໃຫ້ຖືກຕ້ອງຕາມຫຼັກການຂອງການຮຽນຮູ້ຕະຫຼອດຊີວິດ, ໃຫ້ມີຄຸນນະພາບ, ໂປ່ງໃສ ແລະ ຍຸຕິທຳ;

6. ຂຶ້ນແຜນງົບປະມານປະຈຳປີ ເພື່ອສົ່ງເສີມ ແລະ ຈັດຕັ້ງປະຕິບັດ ວຽກງານຮຽນຮູ້ຕະຫຼອດຊີວິດ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບ ແລະ ລາຍງານ ຈັດຕັ້ງປະຕິບັດວຽກງານຮຽນຮູ້ຕະຫຼອດຊີວິດ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ເນື້ອໃນການກວດກາ**

ເນື້ອໃນການກວດກາ ວຽກງານຮຽນຮູ້ຕະຫຼອດຊີວິດ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດລະບຽບການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ;

2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ບຸກຄະລາກອນ ທີ່ກ່ຽວຂ້ອງກັບວຽກງານຮຽນຮູ້ຕະຫຼອດຊີວິດ;

3. ການປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຮຽນຮູ້ຕະຫຼອດຊີວິດ;

4. ການປະເມີນ ແລະ ຢັ້ງຢືນຜົນ ການຮຽນ-ການສອນ.

**ມາດຕາ 30 ຮູບການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ ຢ່າງໜ້ອຍຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ ແລະ ດຳເນີນວຽກງານການຮຽນຮູ້ຕະຫຼອດຊີວິດ ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍການພັດທະນາຊັບພະຍາກອນມະນຸດ ຢ່າງມີປະສິດທິຜົນນັ້ນຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ໝວດທີ 8
## ງົບປະມານ ສຳລັບວຽກງານຮຽນຮູ້ຕະຫຼອດຊີວິດ

### ມາດຕາ 33 ການສ້າງແຜນງົບປະມານ

ກະຊວງສຶກສາທິການ ແລະ ກິລາ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ, ບັນດາພະແນກການຂັ້ນແຂວງ, ນະຄອນຫຼວງ, ອົງການທຽບເທົ່າພະແນກການຂັ້ນແຂວງ, ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ, ຫ້ອງການທຽບເທົ່າຂັ້ນເມືອງ ແລະ ສະຖານການສຶກສາ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການສ້າງແຜນງົບປະມານໄລຍະສັ້ນ, ໄລຍະຍາວ ເພື່ອຈັດຕັ້ງປະຕິບັດກິດຈະກຳ ຕາມແຜນການພັດທະນາວຽກງານຮຽນຮູ້ຕະຫຼອດຊີວິດ ໃນແຕ່ລະປີໃຫ້ລະອຽດ ແລະ ນຳສະເໜີຂັ້ນເທິງທີ່ກ່ຽວຂ້ອງ ເພື່ອພິຈາລະນາອະນຸມັດ ຕາມລະບຽບການ.

### ມາດຕາ 34 ແຫຼ່ງງົບປະມານ

ແຫຼ່ງງົບປະມານ ທີ່ນຳໃຊ້ໃນວຽກງານຮຽນຮູ້ຕະຫຼອດຊີວິດ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ທຶນຊ່ວຍເຫຼືອລ້າ ຫຼື ກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
3. ທຶນຊ່ວຍເຫຼືອລ້າ ຫຼື ທຶນແລກປ່ຽນຂອງອົງການປົກຄອງທ້ອງຖິ່ນ ຫຼື ຂອງສະຖານການສຶກສາ ພາຍໃນ ແລະ ຕ່າງປະເທດ;
4. ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ໃນການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ສະຖານການສຶກສາ ທັງພາກລັດ ແລະ ພາກເອກະຊົນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 36 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ